# ກອງປະຊຸມຜູ້ບໍລິຫານອາຊີວະສຶກສາ ທົ່ວປະເທດ ປະຈຳປີ 2023

ກອງປະຊຸມຜູ້ບໍລິຫານອາຊີວະສຶກສາ ທົ່ວປະເທດ ປະຈຳປີ 2023 ທີ່ ສູນຝຶກອົບຮົມແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ ວັນທີ 20-21 ທັນວາ 2023. ໃຫ້ກຽດເປັນປະທານກອງປະຊຸມໃນຄັ້ງນີ້ໂດຍທ່ານ ຮສ. ປອ. ພຸດ ສິມມາລາວົງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຊຶ່ງຜູ້ແທນເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ປະກອບມີ: ຄະນະກົມ, ຮອງກົມ ຈາກບັນດາກົມອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ,ຫົວໜ້າພະແນກ/ ຮອງຫົວໜ້າພະແນກ ແລະ ຜູ້ຕາງໜ້າ ພະແນກສຶກສາ ແລະ ກິລາ ແຂວງ / ນະຄອນຫຼວງ ໃນທົ່ວປະເທດ, ຜູ້ອຳນວຍການ, ຮອງອຳນວຍການສະຖາບັນ, ຜູ້ອຳນວຍການສະຖານອາຊີວະສຶກສາ, ຜູ້ຊ່ຽວຊານທັງພາຍໃນ ແລະ ຕ່າງປະເທດ, ຫົວໜ້າພະແນກ/ຮອງພະແນກ, ແລະ ວິຊາການ ຈາກກົມອາຊີວະສຶກສາ ລວມທັງໝົດຈຳນວນ 128 ທ່ານ ຍິງ 29 ທ່ານ ຊຶ່ງຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ແມ່ນເພື່ອ ສະຫຼຸບການຈັດຕັ້ງປະຕິບັດ ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ປະຈຳປີ 2023 ແລະ ແຜນພັດທະນາ ວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ປະຈຳປີ 2024




